# ສິດຂອງທ່ານໃນລະຫວ່າງການອຸທອນ

**<u>ສິດໃນການ "ແຈ້ງການໃຫ້ພຽງພໍ"</u>**
ທ່ານມີສິດໄດ້ຮັບແຈ້ງການເປັນລາຍລັກອັກສອນທີ່ເປັນພາສາທຳມະດາ, ຊັດເຈນ, ແລະບໍ່ແມ່ນພາສາດ້ານວິຊາການ.
ແຈ້ງການຕ້ອງໄດ້ຮັບການສະໜອງໃຫ້ ເປັນພາສາ ທີ່ທ່ານຕ້ອງການ ແລະພາສາທີ່ມັກໂດຍຕົວແທນຂອງທ່ານ, ຖ້າທ່ານມີ.

**<u>ສິດຈະໄດ້ຮັບຂໍ້ມູນໂດຍວິທີການທີ່ທ່ານເລືອກ</u>**
ທ່ານມີສິດທີ່ຈະໄດ້ຮັບຂໍ້ມູນທາງໄປສະນີ, ອີເມວ, ຫຼືວິທີການອື່ນໆທີ່ທ່ານເລືອກ.

**<u>ສິດໃນການອຸທອນການຕັດສິນໃຈ ຫຼື ການກະທຳທີ່ສະເໜີໃຫ້ໂດຍສູນພາກພື້ນ</u>**
ທ່ານມີສິດທີ່ຈະຍື່ນອຸທອນຖ້າຫາກວ່າທ່ານບໍ່ເຫັນດີກັບການຕັດສິນ ຫຼື ການດຳເນີນການໂດຍສູນພາກພື້ນ.
ການຮ້ອງຂໍການອຸທອນຕ້ອງຖືກຍື່ນພາຍໃນ 60 ວັນຫຼັງຈາກແຈ້ງການຂອງການຕັດສິນ ຫຼື ການດຳເນີນການ.

**<u>ສິດໃນການຮັກສາການບໍລິການປັດຈຸບັນຂອງທ່ານ</u>**
ທ່ານມີສິດສືບຕໍ່ການມີສິດ ຫຼື ການບໍລິການທີ່ທ່ານໄດ້ຮັບໃນປັດຈຸບັນໃນລະຫວ່າງການອຸທອນ. ອັນນີ້ເອີ້ນວ່າ "ການຊ່ວຍເຫຼືອທີ່ຍັງຄ້າງຢູ່."
ເພື່ອຮັກສາສິດ ຫຼືການບໍລິການຂອງທ່ານ, ຄຳຮ້ອງຂໍການອຸທອນຂອງທ່ານຈະຕ້ອງໄດ້ຮັບໂດຍ DDS ຫຼືຈຳກາໄປສະນີໄວ້ 30
ວັນຫຼັງຈາກທີ່ທ່ານໄດ້ຮັບແຈ້ງການຂອງການ ດຳເນີນການ (NOA) ຂອງທ່ານ ແລະກ່ອນທີ່ການດຳເນີນການຈະເກີດຂຶ້ນ.

**<u>ສິດໃນການເຂົ້າເຖິງບັນທຶກຂອງທ່ານ</u>**
ທ່ານມີສິດໃນການເຂົ້າເຖິງບັນທຶກຂອງສູນພາກພື້ນກ່ຽວກັບທ່ານ. ນີ້ຫມາຍຄວາມວ່າທ່ານສາມາດເບິ່ງບັນທຶກສູນກາງພາກພື້ນຂອງທ່ານໄດ້.
ທ່ານອາດຈະ ໄດ້ຮັບສຳເນົາບັນທຶກຂອງທ່ານນຳ. ສູນປະຈຳເຂດອາດຈະຄິດຄ່າບໍລິການທ່ານສຳລັບຄ່າໃຊ້ຈ່າຍຕົວຈິງຂອງການເຮັດສຳເນົາ.
ຖ້າທ່ານບໍ່ສາມາດຈ່າຍຄ່າບັນ ທຶກໄດ້, ໃຫ້ບອກສູນພາກພື້ນຂອງທ່ານ ແລະຖາມວິທີເອົາສຳເນົາບັນທຶກຂອງທ່ານໂດຍບໍ່ເສຍຄ່າໃຊ້ຈ່າຍ.
ທ່ານຄວນໄດ້ຮັບການເຂົ້າເຖິງບັນທຶກຂອງທ່ານ ພາຍໃນ 3 ວັນທາງລັດຖະການຈາກວັນທີຮ້ອງຂໍຂອງທ່ານ.

**<u>ສິດໃນການຕັດສິນໃຈການມີສ່ວນຮ່ວມຂອງທ່ານໃນຂັ້ນຕອນການອຸທອນ</u>**
ທ່ານສາມາດເລືອກັບຕອນການອຸທອນພາກໃດພາກໜຶ່ງທີ່ທ່ານຕ້ອງການໃຊ້. ການເລືອກຂອງທ່ານແມ່ນເປັນການປະຊຸມແບບບໍ່ເປັນທາງການ,
ການໄກ່ເກ່ຍ, ຫຼື ການໄຕ່ສວນ. ເຈົ້າອາດຈະເລືອກໃຊ້ພາກໃດພາກໜຶ່ງ ຫຼືທັງໝົດທຸກພາກເຫຼົ່ານີ້.
ນອກນັ້ນທ່ານຍັງສາມາດເລືອກວິທີການເຂົ້າຮ່ວມກອງປະຊຸມທີ່ບໍ່ເປັນ ທາງການ, ການໄກ່ເກ່ຍ ຫຼືການໄຕ່ສວນ: ທາງໂທລະສັບ, ວິດີໂອ
ຫຼືດ້ວຍຕົນເອງ. ທ່ານສາມາດແກ້ໄຂຄຳຮ້ອງຂໍອຸທອນຂອງທ່ານໃນທຸກເວລາທີ່ຈະນຳໃຊ້ ພາກໃດພາກໜຶ່ງ ຫຼື ທຸກຂັ້ນຕອນເຫຼົ່ານີ້ທັງໝົດ.

**<u>ສິດໃນການເລືອກເວລາ ແລະສະຖານທີ່ທີ່ສະດວກສະບາຍ</u>**
ທ່ານມີສິດໃນການເຂົ້າຮ່ວມປະຊຸມບໍ່ເປັນທາງການ, ການໄກ່ເກ່ຍ, ແລະການໄຕ່ສວນຂອງທ່ານໃນແຕ່ລະຄັ້ງ ແລະ
ສະຖານທີ່ທີ່ທ່ານພ້ອມເຂົ້າຮ່ວມ.

**<u>ສິດໄດ້ຮັບການຊ່ວຍເຫຼືອ ຫຼື ສະໜັບສະໜູນ</u>**
ທ່ານມີສິດທີ່ຈະມີຄົນຊ່ວຍ ຫຼື ສະໜັບສະໜູນທ່ານ. ມັນອາດຈະເປັນທະນາຍຄວາມ ຫຼືບຸກຄົນອື່ນ.
ບຸກຄົນນີ້ອາດຈະເປັນຕົວແທນທີ່ໄດ້ຮັບອະນຸຍາດຈາກ ທ່ານ, ຫຼືຫມູ່ເພື່ອນ ຫຼືສະມາຊິກໃນຄອບຄົວ. ຖ້າທ່ານຕົກລົງເຫັນດີ,
ຕົວແທນທີ່ໄດ້ຮັບອະນຸຍາດຈາກທ່ານຈະໄດ້ຮັບຂໍ້ມູນກ່ຽວກັບການອຸທອນຂອງທ່ານ.

ທ່ານອາດຈະຂໍໃຫ້ທະນາຍຄວາມ ຫຼືຜູ້ອື່ນຊ່ວຍທ່ານກະກຽມການອຸທອນຂອງທ່ານ.
ທ່ານອາດຈະມີທະນາຍຄວາມເຂົ້າຮ່ວມພາກໃດໜຶ່ງຂອງການອຸທອນ ຂອງທ່ານ. ທ່ານຕ້ອງບອກສູນກາງພາກພື້ນລ່ວງໜ້າ
ຖ້າຫາກທ່ານຈະມີທະນາຍຄວາມເຂົ້າຮ່ວມກອງປະຊຸມບໍ່ເປັນທາງການ, ການໄກ່ເກ່ຍ, ຫຼືການໄຕ່ສວນ.
ສູນພາກພື້ນບໍ່ສາມາດມີທະນາຍຄວາມເຂົ້າຮ່ວມພາກໃດໜຶ່ງຂອງການອຸທອນ ເວັ້ນເສຍແຕ່ທ່ານມີທະນາຍຄວາມເຂົ້າຮ່ວມ,
ຫຼືທ່ານເປັນທະນາຍຄວາມ.

**<u>ສິດໃນການຂໍຂະຫຍາຍເວລາເພີ່ມເຕີມ</u>**

ຖ້າທ່ານຕ້ອງການເວລາຫຼາຍຂຶ້ນ, ທ່ານອາດຈະຂໍຂະຫຍາຍເວລາເພີ່ມເຕີມ. ນີ້ເອີ້ນວ່າ ການສືບຕໍ່.
ການສືບຕໍ່ອາດຂະຫຍາຍເວລາໃນການແກ້ໄຂການອຸທອນ ຂອງທ່ານ, ແລະຕ້ອງຮ້ອງຂໍກ່ອນຈະມີການໄຕ່ສວນເກີດຂຶ້ນ.

ຄັ້ງທຳອິດທີ່ທ່ານຮ້ອງຂໍການສືບຕໍ່, ທ່ານບໍ່ຈຳເປັນຕ້ອງໃຫ້ເຫດຜົນ. ຖ້າຫາກວ່າທ່ານຮ້ອງຂໍການສືບຕໍ່ຄັ້ງຕໍ່ໄປ, ທ່ານຈະຕ້ອງໃຫ້ເຫດຜົນ (ອັນນີ້ເອີ້ນວ່າ "ເຫດຜົນທີ່ດີ") ສໍາລັບການຮ້ອງຂໍຂອງທ່ານ.

**<u>ສິດໃນການຮ້ອງຂໍໃຫ້ປ່ຽນຜູ້ໄກ່ເກ່ຍ ຫຼື ພະນັກງານໄຕ່ສວນ</u>**
ທ່ານອາດຈະຮ້ອງຂໍໃຫ້ປ່ຽນຜູ້ໄກ່ເກ່ຍ ຫຼື ພະນັກງານການໄຕ່ສວນ ຖ້າທ່ານຄິດວ່າເຂົາເຈົ້າບໍ່ສາມາດໃຫ້ຄວາມຍຸຕິທຳໄດ້.
ທ່ານຕ້ອງເຮັດແນວນີ້ກ່ອນການ ໄກ່ເກ່ຍ ຫຼືການໄຕ່ສວນເລີ່ມຕົ້ນ ແລະໃຫ້ເຫດຜົນໃນການຮ້ອງຂໍຂອງທ່ານ.

**<u>ສິດໃນການເຂົ້າຮ່ວມການໄຕ່ສວນ</u>**
ທ່ານມີສິດເຂົ້າຮ່ວມທຸກພາກຂອງການໄຕ່ສວນຂອງທ່ານ.

**<u>ສິດໃນການຕັດສິນໃຈວ່າການໄຕ່ສວນເປີດໃຫ້ສາທາລະນະ ຫຼື ບໍ່</u>**
ການໄຕ່ສວນເປັນແບບເປີດສາທາລະນະ. ຖ້າທ່ານບໍ່ຕ້ອງການໃຫ້ປະຊາຊົນເຂົ້າຮ່ວມການໄຕ່ສວນຂອງທ່ານ,
ໃຫ້ທ່ານບອກພະນັກງານໄຕ່ສວນຮູ້ວ່າທ່ານ ຕ້ອງການໃຫ້ການໄຕ່ສວນເປັນແບບປິດ.
ທ່ານສາມາດເຮັດສິ່ງນີ້ເປັນລາຍລັກອັກສອນກ່ອນການໄຕ່ສວນ, ຫຼືເປັນລາຍລັກອັກສອນ ຫຼືດ້ວຍວາຈາຢູ່ທີ່ຫ້ອງ
ໄຕ່ສວນກ່ອນທີ່ຈະເລີ່ມຕົ້ນການໄຕ່ສວນ.

**<u>ສິດໃນການໄຕ່ສວນແບບບໍລິຫານ</u>**
ທ່ານມີສິດທີ່ຈະເວົ້າຢ່າງເສລີ ແລະ ເປີດໃຈຢູ່ໃນການໄຕ່ສວນຂອງທ່ານ. ພະນັກງານການໄຕ່ສວນຈະຊ່ວຍທ່ານ ແລະສູນພາກພື້ນ
ແບ່ງປັນຂໍ້ເທັກຈິງ.

**<u>ສິດໃນການມີຜູ້ແປພາສາ</u>**
ຖ້າພາສາທີ່ຕ້ອງການບໍ່ແມ່ນພາສາອັງກິດ, ທ່ານມີສິດໄດ້ຮັບນາຍແປພາສາທີ່ສາມາດຕີຄວາມໝາຍໄດ້ຢ່າງມີປະສິດທິພາບ, ຖືກຕ້ອງ ແລະ
ເປັນກາງ. ທ່ານ ອາດຈະຮ້ອງຂໍນາຍແປພາສາຜູ້ໜຶ່ງຢູ່ໃນແບບຟອມການຮ້ອງຂໍການອຸທອນຂອງທ່ານ.
ຈະມີຜູ້ແປພາສາສະໜອງໃຫ້ສໍາລັບທຸກພາກຂອງການອຸທອນຂອງ ທ່ານ.

**<u>ສິດໃນການໃຫ້ຂໍ້ມູນແກ່ພະນັກງານໄຕ່ສວນ.</u>**
ທ່ານອາດຈະໃຫ້ຂໍ້ມູນແກ່ພະນັກງານໄຕ່ສວນເພື່ອສະໜັບສະໜູນການອຸທອນຂອງທ່ານ. ຂໍ້ມູນນີ້ເອີ້ນວ່າຫຼັກຖານ. ທ່ານ ແລະ
ຄົນອື່ນໆທີ່ທ່ານເລືອກອາດຈະ ໃຫ້ຂໍ້ມູນແກ່ພະນັກງານໄຕ່ສວນທາງວາຈາ. ຄົນເຫຼົ່ານີ້ເອີ້ນວ່າພະຍານ.
ທ່ານອາດຈະສະໜອງເອກະສານທີ່ເປັນລາຍລັກອັກສອນໃຫ້ຫ້ອງການໄຕ່ສວນ.

ຄຳຖະແຫຼງການຕຳແໜ່ງຂອງສູນພາກພື້ນ ແລະຫຼັກຖານຈະຕ້ອງເປັນພາສາທີ່ທ່ານຕ້ອງການ,
ແລະພາສາທີ່ຕ້ອງການຂອງຕົວແທນທີ່ໄດ້ຮັບອະນຸຍາຈາກ ທ່ານ, ຖ້າທ່ານມີ.
ຖ້າສູນພາກພື້ນບໍ່ສາມາດສະໜອງສະບັບແປຂອງເອກະສານເຫຼົ່ານີ້ໄດ້, ເຂົາເຈົ້າຈະແຈ້ງໃຫ້ທ່ານຮູ້, ສະໜອງສຳເນົາເປັນພາສາອັງກິດ, ແລະ
ຮ້ອງຂໍໃຫ້ມີການສືບຕໍ່ພ້ອມກັບຫຼັກຖານຂອງຄວາມພະຍາຍາມໃນການແປເອກະສານ.
ທ່ານຕ້ອງໄດ້ຮັບຂໍ້ມູນນີ້ຢ່າງໜ້ອຍສອງມື້ເຮັດວຽກກ່ອນການໄຕ່ສວນ ຄະດີຂອງທ່ານ.

**<u>ສິດໃນການຕັ້ງຄຳຖາມກັບພະຍານຂອງສູນພາກພື້ນ</u>**
ສູນກາງພາກພື້ນອາດຈະມີພະຍານເປັນພະຍານໃນການໄຕ່ສວນ. ທ່ານມີສິດຖາມຄຳຖາມກັບພະຍານຂອງສູນພາກພື້ນ.